ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສຳນັກງານ ຄຄຊ
ເລກທີ ...703...
ວັນທີ ...
ໂທລະສັບ 021 21...

ເລກທີ: 27 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 09 ກໍລະກົດ 2015

## ລາຍງານການເຄື່ອນໄຫວປະຈຳອາທິດ
## ທີ 29/06/2015 ຫາ 03/07/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
## ຂອງທະນາຄານແຫ່ງ ສປປ ລາວ

### I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

##### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 23/06/2015 | ອາທິດນີ້ 30/06/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ (–) |
|---|---|---|---|
| ເອີໂຣ/ ໂດລາ | 1,1275 | 1,1186 | 0,80% |
| ໂດລາ/ເຢນ | 123,60 | 122,36 | 1,01% |
| ໂດລາ/ບາດ | 33,73 | 33,76 | -0,12% |
| ໂດລາ/ເປໂຊ | 45,10 | 45,11 | -0,03% |
| ໂດລາ/ຣູເປັຍ | 13.280,78 | 13.326,33 | -0,34% |
| ໂດລາ/ໂດລາສິງກະໂປ | 1,3376 | 1,3460 | -0,62% |
| ໂດລາ/ຢວນ | 6,2077 | 6,2041 | 0,06% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 3,09% ຈາກ 60,52 ໂດລາ/ບາເຣວ ມາເປັນ 58,65 ໂດລາ/ບາເຣວ ແລະ ລາຄາຄຳໃນຕະຫຼາດໂລກຫຼຸດລົງ 0,76% ຈາກ 1.185,57 ໂດລາ/ອອນ ມາເປັນ 1.176,60 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,05% ສຳລັບອັດຕາ ທຫກ ແຕ່ອ່ອນຄ່າລົງ 0,05% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,11% ສຳລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 0,36% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,35% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 0,29% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 1,85% ສຳລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 3,04% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 23/06/2015 | | | ອາທິດນີ້ 30/06/2015 | | | % (+) ເງິນກີບແຂງ/(-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.095,03 | 8.126,00 | 8.110,54 | 8.095,28 | 8.127,89 | 8.106,45 | -0,003% | -0,02% | 0,05% |
| ບາດ | 242,71 | 243,89 | 243,51 | 242,61 | 243,60 | 243,26 | 0,04% | 0,12% | 0,11% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.118,93 | 8.141,87 | 8.130,40 | 8.121,43 | 8.147,00 | 8.134,22 | -0,03% | -0,06% | -0,05% |
| ບາດ | 244,10 | 246,03 | 245,07 | 243,13 | 245,23 | 244,18 | 0,40% | 0,33% | 0,36% |
| ຜິດດ່ຽງອັດຕາ ທຫກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,30% | 0,20% | 0,24% | 0,32% | 0,24% | 0,34% | | | |
| ບາດ | 0,57% | 0,88% | 0,64% | 0,22% | 0,67% | 0,38% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ເພີ່ມຂຶ້ນ 3,37% ທຽບໃສ່ວັນທີ 26/06/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 35,42%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,60% ເມື່ອທຽບໃສ່ວັນທີ 26/06/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 21,15%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 29/06/2015) ເຫັນວ່າ ທຫກ ຊື້ໂດລາສຸດທິ 19,88 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 79,36 ລ້ານໂດລາ ແລະ ຂາຍໂດລາໄດ້ 59,48 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 1.689,90 ລ້ານບາດ (ໃນນີ້ ຊື້ບາດໄດ້ 317,56 ລ້ານບາດ ແລະ ຂາຍບາດໄດ້ 2.007,46 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາ ເພີ່ມຂຶ້ນ 31,49% ແຕ່ຫຼຸດລົງ 9,29% ສຳລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 6,84 ລ້ານໂດລາ ແລະ ເງິນບາດມີຈຳນວນ 245,58 ລ້ານບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທຫກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 23,70 ລ້ານໂດລາ ແລະ ຂາຍບາດສຸດທິ ຈຳນວນ 420 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈຳນວນ 28,49 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈຳນວນ 551,22 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີຜ່ານມາ 23/06/2015 | | ອາທິດທີ 29/06/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 17,48 | 161,77 | 17,42 | 141,69 | -0,38% | -12,41% |
| - ທ/ຄທຸລະກິດອື່ນໆ | 51,26 | 136,12 | 61,94 | 175,87 | 20,85% | 29,21% |
| ລວມຊື້: | **68,74** | **297,88** | **79,36** | **317,56** | **15,45%** | **6,61%** |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 26,25 | 340,96 | 22,09 | 219,53 | -15,86% | -35,61% |
| - ທ/ຄທຸລະກິດອື່ນໆ | 10,59 | 1.924,41 | 37,39 | 1.787,93 | 252,94% | -7,09% |
| ລວມຂາຍ: | **36,85** | **2.265,37** | **59,48** | **2.007,46** | **61,42%** | **-11,38%** |
| ຊື້-ຂາຍສຸດທິ ທທກ | 31,89 | -1.967,49 | 19,88 | -1.689,90 | -37,67% | -14,11% |
| ຜິດດ່ຽງ ຊື້-ຂາຍ | 46,39 | -660,49 | 25,05 | -532,14 | -213,76% | 128,58% |
| ມູນຄ່າການຊື້-ຂາຍ | 105,59 | 2.563,26 | 138,84 | 2.325,03 | 31,49% | -9,29% |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0,00 | 267,22 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 25,46 | 345,00 | 23,70 | 420,00 | | |
| ຊື້-ຂາຍສຸດທິ ທຫລ | **-25,46** | **-77,78** | **-23,70** | **-420,00** | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **8,30** | **302,36** | **6,84** | **245,58** | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,03 | 1.176,21 | 0,42 | 763,52 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 38,88 | 0,00 | 28,91 | 212,30 | | |
| ຊື້-ຂາຍສຸດທິ ທຫລ | **-38,85** | **1.176,21** | **-28,49** | **551,22** | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ ປະຈຳເດືອນ 06/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 1,21% ເພີ່ມຂຶ້ນ 0,02% ຈາກ 1,19% ໃນເດືອນ 05/2015.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ**

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 72,65 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງຫຼຸດລົງ 52,3% ທຽບໃສ່ອາທິດຜ່ານມາ.

**2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 982 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 37,72% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 1.363,23 ຕື້ກີບ ເພີ່ມຂຶ້ນ 56,07% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) (26/06-02/07/2015) ມີຈຳນວນ 1.706 ຄັ້ງ ໂດຍມີມູນຄ່າ 500,97 ຕື້ກີບ ເພີ່ມຂຶ້ນ 69,11% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 442 ຄັ້ງ.

**2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.392,71 ຈຸດ ເພີ່ມຂຶ້ນ 0,05% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 57.635 ຮຸ້ນ ແລະ ມີມູນຄ່າການ ຊື້-ຂາຍ 302,76 ລ້ານກີບ ເພີ່ມຂຶ້ນ 1,20% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 49,90% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 6.090 ກີບ/ຮຸ້ນ ເພີ່ມຂຶ້ນ 41 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1.071 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 6,52 ລ້ານກີບ ຫຼຸດລົງ 88,01% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 10% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,70%[2].

ຮຸ້ນຂອງບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.069 ກີບ/ຮຸ້ນ ເພີ່ມຂຶ້ນ 16 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 29.698 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 209,94 ລ້ານກີບ ຫຼຸດລົງ 13,87% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 48,80% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,28%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດທີ່ 7.900 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໂດຍໃນອາທິດນີ້ ແມ່ນບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

ຮຸ້ນຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 3.212 ກີບ/ຮຸ້ນ ຫຼຸດລົງ 288 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 26.866 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 86,29 ລ້ານກີບ ເພີ່ມຂຶ້ນ 8.118,79% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 56,85% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,69%[5].

**3. ວຽກງານອື່ນໆ ທີ່ພົ້ນເດັ່ນ.**

- ສຳເລັດການເຂົ້າຮ່ວມກອງປະຊຸມ: ❶ກອງປະຊຸມເຜີຍແຜ່ຫຼັກການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມການປ່ອຍສິນເຊື່ອໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ ໂຮງແຮມ ລາວພຣາຊາ, ❷ກອງປະຊຸມປຶກສາຫາລືຂອງບັນດາຜູ້ມີສ່ວນຮ່ວມຂອງການສຳຫຼວດຂໍ້ມູນຄວາມຕ້ອງການເຂົ້າເຖິງການບໍລິການທາງດ້ານການເງິນໃນທົ່ວປະເທດ (Finscope) ປະເທດລາວ ປີ 2014 ແລະ ການຊົມໃຊ້ການບໍລິການທາງດ້ານການເງິນໃນລະບົບ ແລະ ນອກລະບົບພາຍໃຕ້ວຽກງານການບໍລິການທາງດ້ານການເງິນທີ່ສາມາດເປັນໄປໄດ້ (MAP) ສຳລັບ ສປປ ລາວ;
- ສຳເລັດການຈັດກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ແກ່ພະນັກງານທະນາຄານແຫ່ງ ສປປ ລາວ ທີ່ ທຫລ;
- ສຳເລັດການເຂົ້າຮ່ວມ ພິທີສະຫຼຸບການເຄື່ອນໄຫວວຽກງານ ຄົບຮອບ 5 ປີ ທີ່ທະນາຄານແຫ່ງ ສປປ ລາວ ພາກກາງ ແຂວງສະຫວັນນະເຂດ.

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2.000 ກີບໃໝ່ ງວດ 5 ຊຸດ 2 ຈຳນວນ 30 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການ ບາເຊວ 2, ❷ຄົ້ນຄວ້າຮ່າງລະບຽບກ່ຽວກັບການຍຶດ, ອາຍັດທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍ ມາດຕາ 38,39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ຍັດຕິ 1267,1373 ຂອງສະພາຄວາມໝັ້ນຄົງ ສປຊ, ❸ຄົ້ນຄວ້າລະບຽບກ່ຽວກັບການປັບໄໝ ບຸກຄົນ, ນິຕິບຸກ ຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❹ຄົ້ນຄວ້າລະບຽບວ່າດ້ວຍ Financial Service provider ກ່ຽວກັບສະຖາບັນການເງິນ, ❺ຄົ້ນຄວ້າຮ່າງດຳລັດວ່າດ້ວຍປົກປ້ອງຜູ້ບໍລິໂພກທາງການເງິນ, ❻ສືບຕໍ່ຄົ້ນຄວ້າເອກະສານ Filling ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ກ່ຽວກັບການສະເໜີຂໍອອກຮຸ້ນສາມັນເພີ່ມທຶນ RO ແລະ PO;
- ສືບຕໍ່ຈັດຕັ້ງປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015);
- ສືບຕໍ່ຄັດເລືອກຜົນງານ 10 ປີ ຂອງກົມກອງ ແລະ ບຸກຄົນ (2005-2015).

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ພາສີ ພິມມະກອນ